# ບົດຂ່າວ

## ພິທີລົງນາມເຊັນສັນຍາຄໍ້າປະກັນການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນ (RO/PO) ລະຫວ່າງ ທຄຕລ ແລະ ບໍລິສັດ ຫຼັກຊັບ ລາວ-ຈີນ (ບລຈ) ຈາກັດ ວັນທີ 19 ກໍລະກົດ 2017.




ໃນວັນທີ 19 ກໍລະກົດ 2017 ທີ່ຜ່ານມາ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ແລະ ບໍລິສັດຫຼັກຊັບ ລາວ-ຈີນ ຈໍາກັດ (ບລຈ) ໄດ້ຈັດພິທີເຊັນສັນຍາຄໍ້າປະກັນການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນ (RO/PO). ການລົງນາມໃນຄັ້ງນີ້ ແມ່ນລົງນາມໂດຍ: ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍໃຫຍ່ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ ແລະ ທ່ານ ລິນລີ ຜູ້ອຳນວຍການ ບໍລິສັດຫຼັກຊັບ ລາວ-ຈີນ ຈໍາກັດ.

ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໃນພິທີລົງນາມໃນຄັ້ງນີ້ ປະກອບມີ:

1. ທ່ານ ປອ ບຸນເຫຼືອ ສິນໄຊວໍລະວົງ, ປະທານສະພາບໍລິຫານ ທຄຕລ, ຫົວໜ້າກົມນະໂຍບາຍການເງິນ, ກະຊວງການເງິນ.
2. ທ່ານ ລາໃຈ ຄັນພຣະວົງສ໌, ຮອງຜູ້ອຳນວຍການ ທຄຕລ

ພ້ອມດ້ວຍຜູ້ຕ່າງໜ້າຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຄະນະຜູ້ແທນຈາກ ບໍລິສັດຫຼັກຊັບ ລາວ-ຈີນ ຈໍາກັດ, ຄະນະພະແນກ, ຄະນະສາຂາ, ຄະນະສູນ, ພະນັກງານ ທຄຕລ, ແລະ ສື່ມວນຊົນຈາກ ຫລາຍພາກສ່ວນ.




ການຮ່ວມມືລະຫວ່າງ ທຄຕລ ແລະ ບລຈ, ໄດ້ເລີ່ມສາຍພົວພັນຕັ້ງແຕ່ປີ 2013 ເປັນຕົ້ນມາ ໂດຍ ທຄຕລ ໄດ້ເປັນຕົວແທນຊໍາລະສະສາງດ້ານຫຼັກຊັບຂອງ ບລຈ ຈົນເຖິງປັດຈຸບັນ. ນອກຈາກນີ້, ທຄຕລ ຍັງໄດ້ໃຊ້ບໍລິການທີ່ປຶກສາທາງດ້ານການເງິນຂອງ ບລຈ ນັບແຕ່ວັນທີ 24 ກຸມພາ 2017 ເປັນຕົ້ນມາ ເພື່ອໃຫ້ຄໍາປຶກສາກ່ຽວກັບການອອກຮຸ້ນສາມັນເພີ່ມທຶນ (RO/PO) ແລະ ການຈົດທະບຽນໃນຕະຫຼາດຫຼັກຊັບລາວໃນອະນາຄົດ.

ທ່ານ ພູຂົງ ຈັນທະຈັກ, ຜູ້ອໍານວຍການໃຫຍ່ ທຄຕລ ໄດ້ກ່າວໃນພິທີວ່າ: ການອອກຈໍາໜ່າຍຮຸ້ນເພີ່ມທຶນໃນຄັ້ງນີ້ ແມ່ນແຜນການລະດົມທຶນເພື່ອເພີ່ມທຶນຕາມທີ່ໄດ້ຖືກຮັບຮອງຈາກກອງປະຊຸມສະໄໝສາມັນຜູ້ຖືຮຸ້ນ ທຄຕລ ປະຈໍາປີ 2012 ຊຶ່ງໄດ້ຈັດຂຶ້ນໃນຄັ້ງວັນທີ 29 ມີນາ ປີ 2013 ເປັນຕົ້ນມາ. ສັນຍາຄໍ້າປະກັນການຈໍາໜ່າຍຮຸ້ນສາມັນເພີ່ມທຶນທີ່ເຊັນໃນວັນນີ້ ແມ່ນເພື່ອຮັບປະກັນໃຫ້ແກ່ ການຈໍາໜ່າຍຮຸ້ນສາມັນເພີ່ມທຶນ ຈໍານວນ 71,145,700 ຮຸ້ນ, ມູນຄ່າລວມທັງໝົດແມ່ນ 360,000,060,000 ກີບ ໃຫ້ໄດ້ຮັບຜົນສໍາເລັດ ຕາມແຜນການ ທີ່ວາງໄວ້ ໂດຍແບ່ງເປັນລະອຽດຄື:

1. ຈໍານວນຮຸ້ນທີ່ສະເໜີອອກຈໍາໜ່າຍໃຫ້ ຜູ້ຖືຮຸ້ນເດີມ ໂດຍກໍານົດສັດສ່ວນສອງຮຸ້ນເດີມຕໍ່ໜຶ່ງຮຸ້ນໃໝ່ (2:1) ຈໍານວນ 68,288,600 ຮຸ້ນ.
2. ຈໍານວນຮຸ້ນທີ່ສະເໜີອອກຈໍາໜ່າຍໃຫ້ ມວນຊົນທົ່ວໄປ ຈໍານວນ 2,857,100 ຮຸ້ນ.

ເງື່ອນໄຂ ແລະ ຮູບແບບການຄໍ້າປະກັນຄັ້ງນີ້ແມ່ນ ຄໍ້າປະກັນການຈໍາໜ່າຍຮຸ້ນທັງໝົດ ຫຼື Firm Commitment Underwriting.ຫຼັງຈາກການເຊັນສັນຍາຄັ້ງນີ້, ທຄຕລ ຈະໄດ້ຮ່ວມກັບບໍລິສັດຫຼັກຊັບລາວຈີນ ຈໍາກັດ ຈັດງານໂຄສະນາ ເຜີຍແຜ່ຂໍ້ມູນການອອກຈໍາໜ່າຍຮຸ້ນສາມັນເພີ່ມທຶນຂອງ ທຄຕລ ລະຫວ່າງວັນທີ 25 ກໍລະກົດ ປີ 2017 ເຖິງ 3 ສິງຫາ ປີ 2017 ແລະ ມີແຜນເປີດຈອງຊື້ຮຸ້ນ RO/PO ໃນລະຫວ່າງວັນທີ 28 ສິງຫາເຖິງ 1 ກັນຍາ ປີ 2017. ພາຍຫຼັງທີ່ສໍາເລັດການເພີ່ມທຶນແລ້ວຈະຂໍນໍາເອົາຮຸ້ນເພີ່ມທຶນດັ່ງກ່າວ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວຕື່ມອີກ.

ທ່ານ ລິນລີ ຜູ້ອໍານວຍການ ບໍລິສັດຫຼັກຊັບ ລາວ-ຈີນ ຈໍາກັດກ່າວວ່າ: ທຄຕລ ເປັນໜຶ່ງໃນທະນາຄານທຸລະກິດທີ່ໃຫຍ່ທີ່ສຸດໃນ ສປປ ລາວ ແລະ ເປັນທະນາຄານທໍາອິດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ. ຜົນການດໍາເນີນງານຂອງທະນາຄານມີກໍາໄລເພີ່ມຂຶ້ນຢ່າງຕໍ່ເນື່ອງ.

ທຄຕລ ໄດ້ສ້າງຍຸດທະສາດໄລຍະ 5 ປີ ແລະ ແຜນທຸລະກິດແຕ່ລະປີເປັນອັນລະອຽດ ໂດຍທະນາຄານຕັ້ງເປົ້າໝາຍຂະຫຍາຍສິນເຊື່ອໃນລະດັບສະເລ່ຍ 12% ຕາມພາວະເສດຖະກິດຢູ່ໃນໄລຍະຂະຫຍາຍຕົວ ໂດຍເນັ້ນການກະຈາຍສິນເຊື່ອໄປຫຼາຍຂະແໜງການ ແລະ ຫຼາຍຂະໜາດລູກຄ້າ. ນອກນັ້ນ, ທຄຕລ ຄວບຄຸມຄຸນນະພາບສິນເຊື່ອໃຫ້ຢູ່ໃນລະດັບດີ ໂດຍກໍານົດ NPL ບໍ່ໃຫ້ກາຍ 3% ແລະ ສ້າງກໍາໄລເພີ່ມຂຶ້ນໃນແຕ່ລະປີ.

ບລຈ ໃນຖານະເປັນທີ່ປຶກສາທາງດ້ານການເງິນ ແລະ ຈະເປັນຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນສາມັນເພີ່ມທຶນ RO/PO ໃນຄັ້ງນີ້, ບລຈ ມີຄວາມເຊື່ອໝັ້ນໃນການຈັດຈໍາໜ່າຍຮຸ້ນສາມັນເພີ່ມທຶນຈໍານວນປະມານ 360 ຕື້ກີບໃຫ້ສໍາເລັດ ແລະ ເຫັນວ່າ ຮຸ້ນຂອງ ທຄຕລ ເປັນໜຶ່ງໃນຮຸ້ນທີ່ໜ້າລົງທຶນ ແລະ ໃຫ້ຜົນຕອບແທນທາງດ້ານເງິນປັນຜົນສູງ, ເໝາະຕໍ່ການລົງທຶນເປັນຢ່າງຍິ່ງ.